ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 2219

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ........................../ກປ

ນະຄອນຫຼວງວຽງຈັນ, ວັນທີ 27 NOV 2020

# ຄຳສັ່ງ

## ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ຕໍ່ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ກິດຈະການການທ່ອງທ່ຽວທຳມະຊາດ ໃນເຂດປ່າສະຫງວນ ແລະ ອຸທິຍານແຫ່ງຊາດ

**ເຖິງ:** - ທ່ານ ຫົວໜ້າກົມປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍປ່າສະຫງວນ ສະບັບເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີຂອງກົມປ່າໄມ້ ສະບັບເລກທີ 5050/ກປມ, ລົງວັນທີ 22 ກັນຍາ 2020;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມນະໂຍບາຍ ແລະ ນິຕິກຳ ສະບັບເລກທີ 667/ກບນ, ລົງວັນທີ 02 ຕຸລາ 2020.

ໃນໄລຍະຜ່ານມາ, ລັດຖະບານ ໄດ້ມີນະໂຍບາຍ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດຳເນີນກິດການການທ່ອງທ່ຽວທຳມະຊາດ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍສະເພາະ ການທ່ອງທ່ຽວທຳມະຊາດໃນເຂດປ່າສະຫງວນທີ່ມີຄວາມຫຼາກຫຼາຍດ້ານຊີວະນາໆພັນ ແລະ ທິວທັດອັນສວຍງາມ ຕິດພັນກັບການຮັບປະກັນບໍ່ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ, ມີຄວາມເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນຂອງປ່າໄມ້ ຕາມທິດນຳທີ່ວ່າ ***"ຄົນ ແລະ ປ່າຢູ່ຮ່ວມກັນຢ່າງສັນຕິ"*** ຊຶ່ງເປັນການສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນໃນທ້ອງຖິ່ນ ໄດ້ດີພໍສົມຄວນ; ຄຽງຄູ່ກັນນັ້ນ, ກໍມີບາງກິດຈະການຍັງບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງຢ່າງເຂັ້ມງວດເປັນຕົ້ນ ການອະນຸມັດດຳເນີນກິດຈະການແບບຊະຊາຍ ແລະ ການຄຸ້ມຄອງບໍ່ລວມສູນເປັນເອກະພາບອັນໄດ້ເຮັດໃຫ້ລັດ ກໍຄືປ່າສະຫງວນ ແລະປະຊາຊົນ ບໍ່ໄດ້ຮັບຜົນປະໂຫຍດເທົ່າທີ່ຄວນ.

ເພື່ອແກ້ໄຂບັນຫາດັ່ງກ່າວ ແນໃສ່ຄຸ້ມຄອງກິດຈະການການການທ່ອງທ່ຽວທຳມະຊາດໃນເຂດປ່າສະຫງວນໃຫ້ມີປະສິດທິພາບ, ເປັນລະບົບ ແລະ ລວມສູນທັງສອດຄ່ອງຕາມກົດໝາຍ ແລະ ລະບຽບການ ນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຊີ້ນຳກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ເຂດອຸທິຍານແຫ່ງຊາດ ແລະ ກອງຄຸ້ມຄອງເຂດຮັກສາພັນສັດປ່າແຫ່ງຊາດຮີບຮ້ອນປະຕິບັດບາງວຽກຈຸດສຸມເລັ່ງດ່ວນ ດັ່ງນີ້:

1.1. ໂຄສະນາເຜີຍແຜ່ ກົດໝາຍ, ດຳລັດ ແລະ ລະບຽບກ່ຽວກັບປ່າໄມ້ທີ່ຕິດພັນກັບວຽກງານທ່ອງທ່ຽວທຳມະຊາດໃນເຂດປ່າສະຫງວນ ໃຫ້ແກ່ການຈັດຕັ້ງ, ສັງຄົມ ແລະ ຜູ້ປະກອບການ ໄດ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ປະຕິບັດພັນທະຢ່າງເຕັມສ່ວນ ຕາມທີ່ກົດໝາຍ ແລະ ລະບຽບການ ວາງອອກ;

1.2. ສົມທົບກັບ ພາກສ່ວນກ່ຽວຂ້ອງ ດຳເນີນການກວດກາ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີຄືນບັນດາຜູ້ດຳເນີນກິດຈະການການທ່ອງທ່ຽວທຳມະຊາດ ຢູ່ໃນ ແລະ ອ້ອມຂ້າງເຂດປ່າສະຫງວນທຸກລະດັບ ແລະ ທຸກປະເພດ ທີ່ດຳເນີນກິດຈະການໃນໄລຍະຜ່ານມາ ແລ້ວລາຍງານ ກົມປ່າໄມ້ຊາບ ພາຍໃນເດືອນທັນວາ 2020 ເພື່ອສັງລວມບັນຊີລາຍຊື່ຜູ້ປະກອບການ ທີ່ຍັງປະຕິບັດບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການວາງອອກ ພ້ອມທັງຄົ້ນຄວ້າ, ສະເໜີ ມາດຕະການ ແລະ ວິທີການແກ້ໄຂໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ;

1.3. ເປັນເຈົ້າການ ສຳຫຼວດ, ເກັບກຳຂໍ້ມູນເຂດທີ່ມີທິວທັດສວຍງາມ, ມີທ່າແຮງບົ່ມຊ້ອນດ້ານຕ່າງໆ ແລະ ບໍ່ມີຄວາມສ່ຽງທີ່ຈະສົ່ງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ເພື່ອກຳນົດ ແລະ ຈັດສັນເປັນເຂດສະເພາະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນພັດທະນາກິດຈະການການທ່ອງທ່ຽວທຳມະຊາດ ໃນເຂດປ່າສະຫງວນ ຫຼື ອຸທິຍານແຫ່ງຊາດ;

2. ໃຫ້ ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ຄົ້ນຄວ້າ ແລະ ສົ່ງເສີມຜູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ສະແດງເຈດຈຳນົງດຳເນີນທຸລະກິດການທ່ອງທ່ຽວທຳມະຊາດໃນເຂດປ່າສະຫງວນ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍປ່າໄມ້, ດຳລັດວ່າດ້ວຍປ່າສະຫງວນ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ. ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈັບຈອງທີ່ດິນປ່າສະຫງວນ ເພື່ອດຳເນີນກິດຈະການການທ່ອງທ່ຽວທຳມະຊາດ ຫຼື ກິດຈະການອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ໃຫ້ ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເກັບກຳຂໍ້ມູນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນ ເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເພື່ອສະເໜີຂັ້ນເທິງຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ;

4. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້ແລ້ວ ໃຫ້ຮີບຮ້ອນໂຄສະນາເຜີຍແຜ່ໃຫ້ແກ່ເປົ້າໝາຍ ເປັນຕົ້ນ ພະນັກງານປ່າໄມ້, ເຈົ້າໜ້າທີ່ປ່າໄມ້, ຜູ້ປະກອບການ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຮັບຊາບຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ ແລະ ຫຍຸ້ງຍາກແນວໃດ ໃຫ້ລາຍງານ ກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບຢ່າງເປັນປົກກະຕິ ເພື່ອຫາວິທີແກ້ໄຂຢ່າງທັນການ;

5. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

ເພັດ ພົມພິພັກ